ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===000===------

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 549/ຫກ

ນະຄອນຫຼວງວຽງຈັນ, ວັນທີ 01 AUG 2016

ສຳນັກງານ ຄຄຊ
ເລກທີ 2745
ວັນທີ 01 AUG 2016
ໂທລະສັບ 021 217770

## ແຈ້ງການ

ເຖິງ: ບັນດາກົມ ແລະ ທຽບເທົ່າກົມພາຍໃນທະນາຄານແຫ່ງ ສປປ ລາວ.

ເລື່ອງ: ການເຊັນຢັ້ງຢືນຄ້ຳປະກັນເງິນກູ້ໃຫ້ພະນັກງານ ຂອງ ທຫລ.

- ອີງຕາມ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບເລກທີ 01/ສພຊ, ລົງວັນທີ 8/12/2008;
- ອີງຕາມ ກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບເລກທີ 06/ສພຊ, ລົງວັນທີ 20/5/2005.

ຫ້ອງການທະນາຄານ ແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການເຊັນຢັ້ງຢືນຄ້ຳປະກັນເງິນກູ້ໃຫ້ພະນັກງານຂອງກົມກອງຕົນເອງ ໃນການໄປກູ້ຢືມເງິນນຳທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ (ຍົກເວັ້ນສະຫະກອນອອມຊັບພະນັກງານຂອງ ທຫລ). ຖ້າມີກໍລະນີດັ່ງກ່າວແມ່ນສະເໜີໃຫ້ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ເປັນຜູ້ພິຈາລະນາ ຢັ້ງຢືນໃຫ້ພະນັກງານຂອງຕົນ ຈະເໝາະສົມກວ່າ. ຖ້າມີຄວາມຈຳເປັນແທ້ ຈຶ່ງສະເໜີມາຍັງຫ້ອງການ ທຫລ ພິຈາລະນາ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ

ເພັດສະຖາພອນ ແກ້ວວົງວິຈິດ